ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 8640/ຫກ

ນະຄອນຫຼວງວຽງຈັນ, ວັນທີ 3 ກໍລະກົດ 2024

## ໜັງສືເຊີນເຂົ້າຮ່ວມປະມູນ

1. ກະຊວງສຶກສາທິການ ແລະ ກິລາ ໄດ້ນໍາໃຊ້ເງິນງົບປະມານລັດ ປະຈໍາປີ 2024 ເພື່ອດໍາເນີນການປະມູນເປີດກວ້າງພາຍໃນ ກ່ຽວກັບການຈັດຊື້ອຸປະກອນເຄື່ອງກິລາ, ຊຸດກິລາ, ແຂ່ງຂັນ ແລະ ອຸປະກອນ ຮັບໃຊ້ວຽກງານບໍລິຫານ ເພື່ອເຂົ້າຮ່ວມງານແຂ່ງຂັນກິລາຄົນພິການຫຼພາອາຊຽນ ຄັ້ງທີ 2 ທີ່ປະເທດອິນໂດເນເຊຍ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດດ້ານການສະໜອງເຄື່ອງກິລາ ແລະ ເຄື່ອງໃຊ້ຫ້ອງການ ແລະ ໃບມອບພັນທະອາກອນ ປະຈໍາປີ 2023 ທີ່ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈໍານົງຊື້ເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າສັງລວມ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ 021 216017, 020 98983434 ໃນໂມງລັດຖະການ, ເລີ່ມຂາຍຊອງປະມູນແຕ່ວັນທີ 11 ກໍລະກົດ 2024 ຫາ 14 ສິງຫາ 2024, ໃນລາຄາ 500.000 ກີບ/ຊອງ, ຈໍານວນເງິນດັ່ງກ່າວ ຈະບໍ່ມີການສົ່ງຄືນ (ວິທີຊໍາລະຕ້ອງຈ່າຍເປັນເງິນສົດ);
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 14 ສິງຫາ 2024 ທີ່ຫ້ອງປະຊຸມກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຊັ້ນ 04 (ຫ້ອງ 414) ຕຶກກະຊວງສຶກສາທິການ ແລະ ກິລາ, ເຂດສະໜາມກິລາເຈົ້າອານຸວົງ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ;
6. ຜູ້ປະມູນຕ້ອງມີເງິນຄໍ້າປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄໍ້າປະກັນ ຈາກທະນາຄານ.

ເຊັນແທນ ຫົວໜ້າຫ້ອງການ

ສົມສີ ສຸດທິວົງ

สแกนด้วย CamScanner